# ແກມຊິວ (GAMCIL)

## ໂຄງການ ສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມ ຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ

### ຝຶກອົບຮົມຄູຝຶກນັກຂ່າວລາວ ຫົວຂໍ້ "ການລາຍງານຂ່າວບັນຫາສີຂຽວ"

ໃນວັນທີ 14 – 18 ຕຸລາ 2024 ສະມາຄົມນັກຂ່າວແຫ່ງ ສປປ ລາວ ແລະ ອົງການແຄຣ໌ ລາວ ໄດ້ຈັດຊຸດຝຶກອົບຮົມຄູຝຶກ ຫົວຂໍ້ **"ການລາຍງານຂ່າວບັນຫາສີຂຽວ"** ໃຫ້ແກ່ ນັກຂ່າວ ພາຍໃຕ້ໂຄງການ ສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມເພື່ອການພັດທະນາສີຂຽວ ໃນ ສປປ ລາວ ທີ່ນະຄອນຫຼວງວຽງຈັນ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 24 ຄົນເປັນຍິງ 15 ຄົນ.

ຈຸດປະສົງຂອງການຝຶກອົບຮົມ ແມ່ນເພື່ອເປັນການສ້າງຄວາມອາດສາມາດໃນການເປັນຄູຝຶກ ໃນວຽກງານການລາຍງານຂ່າວສີຂຽວ ໃຫ້ແກ່ນັກຂ່າວລາວ ໂດຍສະເພາະແມ່ນ ການຊອກຫາແຫຼ່ງຂໍ້ມູນທີ່ໜ້າເຊື່ອຖືໄດ້, ການລາຍງານຂ່າວກ່ຽວກັບສີຂຽວ, ການຂຽນບົດເລື່ອງກ່ຽວກັບບັນຫາສີຂຽວ, ການຖ່າຍຮູບພາບໃຫ້ມີຄວາມໜ້າສົນໃຈ, ການນຳໃຊ້ເຄື່ອງມືຄານວ້າ (Canva) ເຂົ້າຊ່ວຍໃນການອອກແບບ, ການໃຫ້ຄວາມຮູ້ກ່ຽວກັບການປ່ຽນແປງດິນຟ້າອາກາດ, ທັກສະການເລົ່າເລື່ອງໃຫ້ໜ້າສົນໃຈ ແລະ ການນຳໃຊ້ເຄື່ອງມືດິຈິຕອນ ເຂົ້າມາຊ່ວຍໃນການລາຍງານຂ່າວ.

ພາຍຫຼັງ ທີ່ສຳເລັດຊຸດຝຶກອົບຮົມຄູຝຶກແລ້ວ ພວກເຂົາຈະໄດ້ນຳເອົາບົດຮຽນທີ່ໄດ້ຮຽນມາ ໄປສອນຕໍ່ໃຫ້ກັບສື່ມວນຊົນ ໃນພື້ນທີ່ເປົ້າໝາຍຂອງໂຄງການ ແລະ ໃນທົ່ວປະເທດ ເພື່ອຮັບປະກັນວ່າ ບົດຮຽນດັ່ງກ່າວ ຈະຊ່ວຍເສີມສ້າງຄວາມອາດສາມາດໃຫ້ພວກເຂົາສາມາດລາຍງານຂ່າວບັນຫາສີຂຽວ ໄດ້ຢ່າງເປັນມືອາຊີບ.







ຝຶກອົບຮົມຄູຝຶກນັກຂ່າວລາວ ຫົວຂໍ້ "ການລາຍງານຂ່າວບັນຫາສີຂຽວ"



## ພິທີເປີດໂຕເວັບໄຊທ໌ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ

ໃນວັນທີ 29 ຕຸລາ 2024, ສະມາຄົມນັກຂ່າວ ແຫ່ງ ສປປ ລາວ (LJA) ແລະ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ມີຄວາມພາກພູມໃຈທີ່ຈະປະກາດການເປີດໂຕເວບໄຊທ໌ ສຳລັບຂອງໂຄງການ ສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ (GAMCIL).



ເວບໄຊທ໌ທີ່ເປີດຕົວໃໝ່ຈະເຮັດໜ້າທີ່ເປັນພື້ນທີ່ໃນການສະແດງເຖິງການຈັດຕັ້ງປະຕິບັດກິດຈະກຳ ຂອງໂຄງການ, ເປັນສູນຂໍ້ມູນການຮຽນຮູ້ກ່ຽວກັບວຽກການພັດທະນາສີຂຽວ, ສະໜອງບົດຮຽນສຳລັບຮຽນຮູ້ການນຳໃຊ້ສື່ໃຫ້ກັບສື່ມວນຊົນ, ນັກຂຽນບລັອກເກີ້, ຢູທູບເບີ້ ແລະ ຜູ້ນຳໃຊ້ສື່ສັງຄົມອອນລາຍທົ່ວໄປ ສາມາດເຂົ້າສູ່ລະບົບເພື່ອຮຽນຮູ້ສຶກສາທາງອອນໄລນ໌ ໂດຍຜ່ານການຮຽນ ຈາກຫຼັກສູດມາດຕະຖານຂອງນັກຂ່າວຄຸນນະພາບສີຂຽວທີ່ຖືກພັດທະນາໂດຍໂຄງການ. ທ່ານສາມາດເຂົ້າໄປເບິ່ງການເຄື່ອນໄຫວອື່ນໆ ຜ່ານເວັບໄຊທ໌ ຂອງໂຄງການໄດ້ທີ່: www.laja.la



ການໃຫ້ຄຳເຫັນຂອງ ທ່ານ ນາງ ແກ້ວອຳພອນ ສຸວັນນະພູມ ໃນງານພິທີເປີດໂຕເວັບໄຊທ໌





## ຝຶກອົບຮົມນັກຂ່າວ ຫົວຂໍ້ "ການລາຍງານຂ່າວບັນຫາສີຂຽວ"

ໃນລະຫວ່າງວັນທີ 21 ຕຸລາ - 22 ພະຈິກ 2024, ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແລະ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ສຳເລັດການຝຶກອົບຮົມ ນັກຂ່າວລາວໃນທົ່ວປະເທດແບບເຊິ່ງໜ້າ ແລະ ແບບອອນລາຍ ກໍຄື ພາກເໜືອ, ພາກກາງ ແລະ ພາກໃຕ້ ຂອງໂຄງການ ສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ ໂດຍມີຜູ້ເຂົ້າຮ່ວມທັງໝົດ 98 ຄົນ ຍິງ 51 ຄົນ.

ຈຸດປະສົງໃນການຝຶກອົບຮົມໃນຄັ້ງນີ້ກໍແມ່ນເພື່ອ ສ້າງຄວາມອາດສາມາດໃຫ້ແກ່ນັກຂ່າວໃຫ້ມີຄວາມເຂົ້າໃຈຕໍ່ການລາຍງານຂ່າວກ່ຽວກັບການພັດທະນາສີຂຽວ ແລະ ບັນຫາສີຂຽວ, ການນໍາໃຊສື່ດິຈິຕອນແບບໃໝ່ຊ່ວຍໃນການລາຍງານຂ່າວໃຫ້ມີຄວາມໜ້າສົນໃຈຫຼາຍຂຶ້ນ.

ໃນການຝຶກອົບຮົມໃນຄັ້ງນີ້ ນັກຂ່າວລາວ ແມ່ນໄດ້ຝຶກ ແລະ ຮຽນຮູ້ກ່ຽວກັບການຂຽນຂ່າວດ້ວຍຮູບແບບໃໝ່ທີ່ສັ້ນກະທັດຫັດ ແຕ່ກວມລວມເນື້ອໃນ, ການລາຍງານຂ່າວກ່ຽວກັບສີຂຽວ, ການຊອກຫາແຫຼ່ງຂໍ້ມູນທີ່ໜ້າເຊື່ອຖືໄດ້, ການຂຽນບົດເລື່ອງກ່ຽວກັບບັນຫາສີຂຽວ, ການຖ່າຍຮູບພາບໃຫ້ມີຄວາມໜ້າສົນໃຈ, ການນຳໃຊ້ເຄື່ອງມືຄານວ້າ (Canva)



ຝຶກອົບຮົມນັກຂ່າວ ຫົວຂໍ້ "ການລາຍງານຂ່າວບັນຫາສີຂຽວ"

ເຂົ້າຊ່ວຍໃນການອອກແບບ, ຄວາມສະເໝີພາບຍິງ-ຊາຍໃນຍຸກດິຈິຕອນ, ການຄຸ້ມຄອງສື່ມວນຊົນ, ສິ່ງແວດລ້ອມ ແລະ ການພັດທະນາສີຂຽວ, ການນຳໃຊ້ປັນຍາປະດິດ (AI) ເຂົ້າໃນການລາຍງານຂ່າວ, ຈັນຍາບັນນັກຂ່າວ ແລະ ຄວາມຮູ້ພື້ນຖານກ່ຽວກັບ. ການຖ່າຍຮູບ ແລະ ຕັດຕໍ່ວິດີໂອໂດຍການນຳໃຊ້ເຄື່ອງມື Capcut.

ພາຍຫຼັງສຳເລັດການຝຶກອົບຮົມ ນັກຂ່າວຍັງໄດ້ລົງພາກປະຕິບັດຕົວຈິງໃນການລົງເກັບກຳຂໍ້ມູນກັບປະຊາຊົນທີ່ເຮັດກ່ຽວກັບກະສິກຳອິນຊີ ເພື່ອເອົາມາເຮັດເປັນບົດຂ່າວ ແລະ ວິດີໂອສັ້ນ ທີ່ເວົ້າເຖິງການເຮັດກະສິກຳແບບຍືນຍົງ, ຜົນປະໂຫຍດຈາກການເຮັດກະສິກຳອິນຊີ ແລະ ໂພສຜ່ານສື່ສັງຄົມອອນລາຍຂອງຕົນເອງອີກດ້ວຍ.




## ງານວາງສະແດງຜົນງານ ແລະ ຜະລິດຕະພັນຂອງ ອົງການຈັດຕັ້ງສັງຄົມ ປະຈຳປີ 2024

ໃນວັນທີ 13-14 ທັນວາ 2024, ໂຄງການ GAMCIL ໄດ້ວາງສະແດງຜະລິດຕະພັນຂອງໂຄງການ ທີ່ບູດອົງການ ແຄຣ໌ ລາວ ໃນງານວາງສະແດງຜົນງານ ແລະ ຜະລິດຕະພັນຂອງ ອົງການຈັດຕັ້ງສັງຄົມ ພາຍໃຕ້ຫົວຂໍ້ "ພ້ອມກັນກ້າວເດີນ ເພື່ອຄວາມສົມບູນພູນສຸກຂອງສັງຄົມລາວ" ຈັດຂຶ້ນທີ ນະຄອນຫຼວງວຽງຈັນ.

ຈຸດປະສົງຂອງງານກໍແມ່ນ ເພື່ອເປັນການວາງສະແດງຜົນງານ ແລະ ຜະລິດຕະພັນຂອງບັນດາອົງການຈັດຕັ້ງສັງຄົມໃນລາວ, ການສ້າງພື້ນທີແລກປ່ຽນຄວາມເຂົ້າໃຈຕໍ່ກັບຜົນງານລວມເຖິງການມີສ່ວນຮ່ວມຂອງອົງການຈັດຕັ້ງສັງຄົມລາວ. ນີ້ເປັນຄັ້ງທຳອິດທີໂຄງການ GAMCIL ໄດ້ເຂົ້າຮ່ວມວາງສະແດງຜະລິດຕະພັນ ແລະ ຜົນສຳເລັດ ຂອງໂຄງການ ໂດຍສະເພາະແມ່ນການເຜີຍແຜ່ຂໍ້ມູນ ແລະ ຜະລິດຕະພັນສື່ ຂອງໂຄງການ ໃຫ້ແກ່ຜູ້ທີ່ເຂົ້າມາຢ້ຽມຊົມ.

ນອກຈາກນັ້ນ ພາຍໃນບູດ ຍັງໄດ້ມີການຮ່ວມລົມນະລົງເພື່ອລະນຶກເຖິງ 16 ວັນສາກົນ ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ, ການຈັດກິດຈະກຳຖາມຕອບເພື່ອຮັບຂອງລາງວັນຈາກໂຄງການອີກດ້ວຍ.







ງານວາງສະແດງຜົນງານ ແລະ ຜະລິດຕະພັນຂອງ ອົງການຈັດຕັ້ງສັງຄົມ ປະຈຳປີ 2024

## ຂະບວນທັດສະນະສຶກສາຂອງນັກຂ່າວລາວ ພາຍໃຕ້ໂຄງການ GAMCIL

ໃນລະຫວ່າງວັນທີ 3-13 ທັນວາ 2024, ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແລະ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ຈັດຂະບວນທັດສະນະສຶກສາໃຫ້ແກ່ນັກຂ່າວ ພາກກາງ ແລະ ພາກເໜືອ ທີ່ເມືອງຂວາ ແຂວງ ຜົ້ງສາລີ ໂດຍການລົງຢ້ຽມຢາມກິດຈະກຳ ຂອງໂຄງການ WECR ແລະ ໂຄງການ KFSP ແລະ ນັກຂ່າວພາກໃຕ້ ທີ່ເມືອງດາກຈຶງ ແຂວງ ເຊກອງ ໃນກິດຈະກຳຂອງໂຄງການ SuPER WE Coffee ທີ່ຈັດຕັ້ງປະຕິບັດໂດຍ ອົງການແຄຣ໌ ລາວ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 76 ຄົນ ຍິງ 37 ຄົນ.

ຈຸດປະສົງໃນການເຂົ້າຮ່ວມທັດສະນະໃນຄັ້ງນີ້ກໍແມ່ນເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ມີວິໄສທັດ ແລະ ມີຄວາມເຂົ້າໃຈຫຼາຍຂຶ້ນ ກ່ຽວກັບສື່ສີຂຽວ, ສົ່ງເສີມໃຫ້ນັກຂ່າວ ໄດ້ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດຕົວຈິງຈາກການເກັບກຳຂໍ້ມູນກ່ຽວກັບການພັດທະນາສີຂຽວ ທີ່ຕິດພັນກັບການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ, ສາມາດນຳເອົາບົດຮຽນທີ່ໄດ້ຮຽນມາ ໃຊ້ເຂົ້າໃນການເກັບກຳຂໍ້ມູນຢ່າງມີຄວາມຊຳນິຊຳນານ ແລະ ສາມາດເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບການພັດທະນາສີຂຽວ ໂດຍຜ່ານການລາຍງານສື່ແບບໃໝ່ໃຫ້ຮູ້ໃນຂອບເຂດທົ່ວປະເທດ.

ໃນການລົງທັດສະນະສຶກສາຂອງນັກຂ່າວ ທີ່ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງຊົນເຜົ່າ ເພື່ອການປັບໂຕເຂົ້າກັບການປ່ຽນແປງຂອງສະພາບດິນຟ້າອາກາດແບບຍືນຍົງ (WECR) ແມ່ນໄດ້ລົງເກັບກຳຂໍ້ມູນ ແລະ ສຳພາດຜູ້ທີ່ໄດ້ຮັບຜົນປະໂຫຍດຂອງໂຄງການ ໃນກິດຈະກຳ ການປູກຜັກສວນຄົວ, ການແບ່ງເບົາພາລະໃນຄົວເຮືອນ, ເຕັກນິກການລ້ຽງເຜິ້ງໂກນ ແລະ ຂະບວນການແປຮູບກາເຟ ທີ່ບ້ານກຸງເກືອຍ. ນອກຈາກນັ້ນ ນັກຂ່າວຍັງໄດ້ລົງສຳພາດຜູ້ທີ່ໄດ້ຮັບຜົນປະໂຫຍດທີ່ບ້ານໃໝ່ ໂຄງການ ຄ້ຳປະກັນສະບຽງອາຫານເມືອງຂວາ (KFSP) ທີ່ໄດ້ຮັບການສະໜອງນ້ຳລິນຈາກໂຄງການ ລວມໄປເຖິງການສ້າງເສດຖະກິດຄອບຄົວ ດ້ວຍການນຳໃຊ້ແຄມຜະລິດເປັນຝອຍກວດ.








ຂະບວນທັດສະນະສຶກສາຂອງນັກຂ່າວລາວ ພາຍໃຕ້ໂຄງການ GAMCIL

ການທັດສະນະສຶກສາຂອງນັກຂ່າວພາກໃຕ້ ທີ່ໂຄງການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍຜ່ານລະບົບຕ່ອງໂສ້ການສ້າງມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ ທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ (SuPER WE Coffee) ແມ່ນໄດ້ລົງເກັບກຳຂໍ້ມູນ ແລະ ສຳພາດຜູ້ທີ່ໄດ້ຮັບຜົນປະໂຫຍດ ໃນກິດຈະກຳ ຂະບວນການຜະລິດກາເຟພູດອຍດາກຈຶງ, ການສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດໃຫ້ແກ່ແມ່ຍິງ ລວມໄປເຖິງການມີສ່ວນຮ່ວມຂອງຄອບຄົວ.

ພາຍຫຼັງສຳເລັດການທັດສະນະສຶກສາແລ້ວ, ນັກຂ່າວລາວແມ່ນມີຄວາມເຂົ້າໃຈຫຼາຍຂຶ້ນກ່ຽວກັບການຂຽນຂ່າວ ແລະ ການລາຍງານຂ່າວສີຂຽວໃນສື່ຮູບແບບໃໝ່ ໂດຍສະເພາະແມ່ນ ການນຳໃຊ້ຮູບພາບ, ວິດີໂອ ເຂົ້າໃນການສ້າງຫົວຂໍ້ຂ່າວ ແລະ ລາຍງານຂ່າວທີ່ຕິດພັນກັບວຽກງານສິ່ງແວດລ້ອມ ຜ່ານທາງສື່ສັງຄົມອອນລາຍ ເພື່ອໃຫ້ຜູ້ຄົນທົ່ວໄປໄດ້ຮັບຮູ້ຂໍ້ມູນກ່ຽວກັບການພັດທະນາສີຂຽວຢ່າງທົ່ວເຖິງ. ນອກຈາກນັ້ນ ນັກຂ່າວທີ່ໄດ້ເຂົ້າຮ່ວມທັດສະນະສຶກສາ ຍັງໄດ້ລາຍງານຂ່າວສີຂຽວ ດ້ວຍຮູບແບບໃໝ່ ທີ່ສັ້ນກະທັດຫັດ ແຕ່ກວມລວມເນື້ອໃນ ຜ່ານສື່ສັງຄົມອອນລາຍຂອງຕົນເອງ ເພື່ອເປັນການເຜີຍແຜ່ຂ່າວການພັດທະນາສີຂຽວໃຫ້ແກ່ ປະຊາຊົນທົ່ວໄປໄດ້ຮັບຮູ້ຢ່າງກວ້າງຂວາງ ແລະ ໄວວາ.




## ການປູກຈິດສຳນຶກ ແລະ ລົບນະລົງການຕ້ານ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ

ໃນຕົ້ນເດືອນທັນວາ 2024 ທີ່ຜ່ານມາ, ໂຄງການ GAMCIL ໄດ້ຮ່ວມກັບອົງການແຄຣ໌ ລາວ ໃນການຈັດກິດຈະກຳ ການປູກຈິດສຳນຶກ ແລະ ລົບນະລົງການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ໂດຍການເຮັດວຽກຮ່ວມກັນລະຫວ່າງ ໜ່ວຍງານສົ່ງເສີມບົດບາດທາງເພດ ຂອງອົງການແຄຣ໌ ລາວ ແລະ ໂຄງການ GAMCIL ໂດຍການມີສ່ວນຮ່ວມ ແລະ ເຜີຍແຜ່ຈາກນັກຂ່າວລາວ ທີ່ຢູ່ນະຄອນຫຼວງວຽງຈັນ, ແຂວງ ອຸດົມໄຊ, ແຂວງ ຫຼວງພະບາງ ແລະ ແຂວງ ຈຳປາສັກ.

ການຈັດກິດຈະກຳໃນຄັ້ງນີ້ ແມ່ນເປັນສ່ວນໜຶ່ງໃນການລົບນະລົງການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ, ການປູກຈິດສຳນຶກໃຫ້ກັບໄວໜຸ່ມ ແລະ ຜູ້ຄົນທົ່ວໄປທາງອອນລາຍ ຜ່ານລາຍການວິທະຍຸ, ການເຮັດກິດຈະກຳຖາມຕອບໃຫ້ກັບຜູ້ຊົມໄດ້ມີສ່ວນຮ່ວມນຳກັນ.










ການປູກຈິດສຳນຶກ ແລະ ລົບນະລົງການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ

“ຂ້າພະເຈົ້າມີຄວາມຮູ້ສຶກດີໃຈຫຼາຍທີ່ທາງໂຄງການໄດ້ຈັດຊຸດຝຶກອົບຮົມໃນຄັ້ງນີ້ ເພາະມັນໄດ້ຊ່ວຍເຮັດໃຫ້ຂ້າພະເຈົ້າມີຄວາມເຂົ້າໃຈຫຼາຍຂຶ້ນກ່ຽວກັບການປ່ຽນແປງດິນຟ້າອາກາດ. ປັດຈຸບັນ ການຖິ້ມຂີ້ເຫຍື້ອຊະຊາຍ, ການປ່ອຍນ້ຳເສຍລົງສູ່ແມ່ນ້ຳ ແລະ ການຈູດຂີ້ເຫຍື້ອອ້ອມຮອບຕົວເມືອງ ແມ່ນເປັນບັນຫາທີ່ເກີດຂຶ້ນເລື້ອຍໆໃນພື້ນທີ່ ທີ່ຂ້າພະເຈົ້າຢູ່. ສະນັ້ນ ຂ້າພະເຈົ້າ ຈະນຳເອົາຄວາມຮູ້ຄວາມເຂົ້າໃຈທີ່ໄດ້ຮຽນມາຈາກໂຄງການ ໄປເຜີຍແຜ່ໂຄສະນາເພື່ອກ່ຽວກັບຜົນກະທົບຈາກການທຳລາຍສິ່ງແວດລ້ອມຜ່ານທາງ ວິທະຍຸ-ໂທລະພາບ ແລະ ສື່ອອນລາຍຕ່າງໆ ແລະ ເພື່ອປູກຈິດສຳນຶກ ໃຫ້ສັງຄົມໄດ້ຮູ້ຈັກກ່ຽວກັບການປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມຍືນຍົງ”



**ທ່ານ ນາງ ເບ ລັດຕະນະ,**
**ນັກຂ່າວໂທລະພາບ ແຂວງ ຈຳປາສັກ.**




“ການຝຶກອົບຮົມໃຫ້ນັກຂ່າວ ໃນຫົວຂໍ້ “ການລາຍງານຂ່າວບັນຫາສີຂຽວ ຂອງໂຄງການ GAMCIL ແມ່ນມີຄວາມສຳຄັນຫຼາຍ ແລະ ຈະໄດ້ຮັບປະສິດທິພາບສູງໃນການໂຄສະນາເຜີຍແຜ່ວຽກງານສິ່ງແວດລ້ອມໃຫ້ທຸກຄົນໃນສັງຄົມໄດ້ຮັບຮູ້ໄດ້ຢ່າງກວ້າງຂວາງ ເພາະນັກຂ່າວແມ່ນກະບອກສຽງຂອງ ພັກ-ລັດ ເມື່ອໄດ້ຮັບຂໍ້ມູນທີ່ຖືກຕ້ອງແລ້ວ ກໍ່ສາມາດນຳໄປເຜີຍແຜ່ ແລະ ຜັນຂະຫຍາຍ ໄດ້ຢ່າງຖືກຈຸດ ແລະ ຖືກກັບກຸ່ມເປົ້າໝາຍທີ່ສຸດ. ໃນຍຸກປັດຈຸບັນແມ່ນສື່ທາງອອນລາຍ ຈະຊ່ວຍໃຫ້ສັງຄົມມີຄວາມຕື່ນໂຕໄວຂຶ້ນ, ສາມາດປຸກລະດົມການມີສ່ວນຮ່ວມຢ່າງແຂງແຮງໃນວຽກງານສິ່ງແວດລ້ອມ ເພື່ອການພັດທະນາແບບຍືນຍົງໃນອະນາຄົດ.”

**ດຣ. ສຸກວິໄລ ວິລະວົງ, ຮອງຫົວໜ້າພະແນກ ນະໂຍບາຍສິ່ງແວດລ້ອມ, ກົມສິ່ງແວດລ້ອມ, ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.**






"ແຕ່ລະປີ, ໂດຍສະເພາະໃນລະດູຝົນ, ປະຊາຊົນມັກຕັດປ່າໄມ້, ຖາງປ່າ ເພື່ອປູກເຂົ້າ ແລະ ສິ່ງນີ້ກໍ່ເຮັດໃຫ້ເກີດມົນລະພິດຫຼາຍ." ປານີ ໄດ້ອະທິບາຍຕື່ມອີກວ່າ "ຂ້າພະເຈົ້າຈະນຳໃຊ້ບົດຮຽນທີ່ໄດ້ຮຽນມາເພື່ອແບ່ງປັນກັບຜູ້ບໍ່ທັນຮັບຮູ້ກ່ຽວກັບການປ່ຽນແປງຂອງດິນຟ້າອາກາດ, ຊ່ວຍໃຫ້ເຂົາເຈົ້າມີຄວາມເຂົ້າໃຈ ແລະ ປ່ຽນແປງພຶດຕິກຳຂອງພວກເຮົາທຸກຄົນໂດຍຕ້ອງໄດ້ປະກອບສ່ວນໃນການປົກປັກຮັກສາສິ່ງແວດລ້ອມ, ເຮັດໃຫ້ສະພາບດິນຟ້າອາກາດດີຂຶ້ນ."

**ທ່ານ ນາງ ປານີ ວິໄລຈິດ, ນັກຂ່າວວິທະຍຸ-ໂທລະພາບ ແຂວງ ຫຼວງພະບາງ**




**ທ່ານ ສີປະເສີດ ລໍມະນີ, ນັກຂ່າວວິທະຍຸ-ໂທລະພາບ ແຂວງ ບໍລິຄຳໄຊ**

"ຂ້າພະເຈົ້າມີຄວາມຮູ້ສຶກດີໃຈຫຼາຍ ທີ່ໄດ້ເຂົ້າຮ່ວມໂຄງການ GAMCIL ເພາະໄດ້ຮັບຄວາມຮູ້ໃໝ່ໆເພີ່ມຂຶ້ນ ໂດຍສະເພາະແມ່ນຄວາມສຳຄັນຂອງສິ່ງແວດລ້ອມ ການພັດທະນາສີຂຽວ ແລະ ບັນຫາສິ່ງແວດລ້ອມ. ຂ້າພະເຈົ້າເຫັນວ່າ ຍັງມີບາງເຂດທີ່ມີການຖາງປະໄຮ່ແບບເລື່ອນລອຍ ເຮັດໃຫ້ຝົນຕົກບໍ່ຖືກຕ້ອງຕາມລະດູການ ເກີດໄພນ້ຳຖ້ວມ ແລະ ດິນສະໄລ້, ພ້ອມກັນນັ້ນ ຈຳນວນຂອງສັດປ່າກໍ່ໜ້ອຍລົງ. ດັ່ງນັ້ນ ຂ້າພະເຈົ້າຈະນຳໃຊ້ຄວາມຮູ້ເຫຼົ່ານີ້ ປະກອບສ່ວນເປັນກະບອກສຽງ ໃນການເຜີຍແຜ່ໂຄສະນາຂ່າວສານ ກ່ຽວກັບສິ່ງແວດລ້ອມໃຫ້ໄດ້ຫຼາຍທີ່ສຸດ ເພື່ອເຮັດໃຫ້ສັງຄົມຮັບຮູ້ຫຼາຍຂຶ້ນກ່ຽວກັບວຽກງານພັດທະນາສີຂຽວ, ຄວາມໝາຍຄວາມສຳຄັນຂອງສິ່ງແວດລ້ອມ ແລະ ບັນຫາທີ່ເກີດຂຶ້ນໃນປັດຈຸບັນ ເພື່ອເຮັດໃຫ້ທຸກພາກສ່ວນໃນສັງຄົມປະກອບສ່ວນຮ່ວມມືໃນການແກ້ໄຂ, ໃຫ້ຄົນ ແລະ ສິ່ງແວດລ້ອມ ຢູ່ຮ່ວມກັນຢ່າງກົມກຽວ ແລະ ມີການພັດທະນາໄປຄຽງຄູ່ກັນແບບຍືນຍົງ."



duangsavan@gmail.com | LAO.Info@care.org
@LaoJournalistsAssociation | @careinlaos
@Laja24 | @careinlaos
www.laja.la | www.careint.org.la
CARE International in Lao PDR

ໃຫ້ທຶນໂດຍ ສະຫະພາບ ເອີຣົບ

**ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ**

ພວກເຮົາຢາກເຫັນໂລກນີ້ເຕັມໄປດ້ວຍຄວາມຫວັງ, ການໃຫ້ອະໄພ, ສັງຄົມມີຄວາມຍຸຕິທຳ, ຫຼຸດພົ້ນຈາກຄວາມທຸກຍາກ ແລະ ປະຊາຊົນດຳລົງຊີວິດຢູ່ຢ່າງປອດໄພ ແລະ ມີກຽດສັກສີ.

ໃຫ້ທຶນໂດຍ ສະຫະພາບ ເອີຣົບ

care

Lao Journalists Association

# ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ



ການວາງແຜນຮ່ວມກັນໃນການປັບຕົວຕໍ່ກັບການປ່ຽນແປງສະພາບດິນຟ້າອາກາດ.

## ແຜນທີ່

ທີ່ຕັ້ງໂຄງການ
ນະຄອນຫຼວງວຽງຈັນ

ພື້ນທີ່ເປົ້າໝາຍ
ຫຼວງພະບາງ, ຈຳປາສັກ



ໄລຍະເວລາ
ມີນາ 2023 - ກຸມພາ 2027

ຜູ້ໄດ້ຮັບຜົນປະໂຫຍດ
ທາງກົງ ຜູ້ຊາຍ ແລະ ແມ່ຍິງ 6,155 ຄົນ
ທາງອ້ອມ ຜູ້ຊາຍ ແລະ ແມ່ຍິງ 10,000 ຄົນ

ຄູ່ຮ່ວມງານ
ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກົມສື່ມວນຊົນ ແລະ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ

## ຄວາມເປັນມາຂອງ ໂຄງການ

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ ແມ່ນໂຄງການໜຶ່ງທີ່ໄດ້ເຮັດວຽກກັບບັນດາສື່ມວນຊົນຂອງລັດ ແລະ ເອກະຊົນ ເພື່ອປັບປຸງທັກສະວິຊາຊີບຂອງນັກຂ່າວລາວ ໂດຍການເພີ່ມຄວາມຮູ້ທາງດ້ານສື່ດິຈິຕອລ ແລະ ຄວາມເຂົ້າໃຈກ່ຽວກັບສື່ແບບໃໝ່. ໂຄງການ ໄດ້ຮັບການສະໜັບສະໜູນຈາກ ໂຄງການ ພັດທະນາສີຂຽວຂອງ ສະຫະພາບ ເອີຣົບ ທີ່ໃຫ້ການສະໜັບສະໜູນນະໂຍບາຍໃນຂົງເຂດດ້ານການປັບຕົວ ແລະ ການຫຼຸດຜ່ອນຄວາມສ່ຽງຕໍ່ກັບດິນຟ້າອາກາດ, ການພັດທະນາເສດຖະກິດ-ສັງຄົມ ແບບຍືນຍົງ.

ໂຄງການ ຍັງໄດ້ເສີມຂະຫຍາຍການຮັບຮູ້ທາງດ້ານ ສື່ດິຈິຕອລ ແລະ ການພັດທະນາສີຂຽວ ເພື່ອເພີ່ມການເຂົ້າເຖິງຂໍ້ມູນຂ່າວສານ ການພັດທະນາທີ່ກ່ຽວຂ້ອງກັບບົດບາດທາງເພດ, ສິດທິຂອງຜູ້ອອກແຮງງານ ແລະ ການພັດທະນາຊຸມຊົນໃນ ສປປ ລາວ ທີ່ຕິດພັນກັບການພັດທະນາສີຂຽວແບບຍືນຍົງ. ໂຄງການຍັງຈະເສີມສ້າງການມີສ່ວນຮ່ວມ, ທັດສະນະຄະຕິ, ວິໄສທັດ ແລະ ຄວາມສາມາດຂອງນັກຂ່າວ ດ້ວຍການສຸມໃສ່ການນຳໃຊ້ສື່ຢ່າງເຂັ້ມແຂງ ເພື່ອສົ່ງເສີມການເຕີບໂຕສີຂຽວຂອງປະຊາຊົນ ໃນ ສປປ ລາວ.

ຜ່ານການຝຶກອົບຮົມ, ການປະຊຸມ, ການແຂ່ງຂັນ ແລະ ການເຮັດກິດຈະກຳຕ່າງໆ, ອົງການຈັດຕັ້ງທາງສັງຄົມລາວ, ນັກຂ່າວລາວ, ນັກສ້າງຮູບເງົາ, ຢູທູບເບີ້ ຈະໄດ້ຮັບການເສີມຂະຫຍາຍຄວາມຮູ້ຄວາມສາມາດ, ໃຫ້ພວກເຂົາໄດ້ມີສ່ວນຮ່ວມຢ່າງສ້າງສັນເຂົ້າໃນການວາງນະໂຍບາຍ, ຕິດຕາມ ແລະ ຊຸກຍູ້ ໂດຍຜ່ານການລາຍງານທີ່ມີຄວາມຮັບຜິດຊອບ ແລະ ເປັນມືອາຊີບ ກ່ຽວກັບການພັດທະນາສີຂຽວ.

## ຈຸດປະສົງຂອງ ໂຄງການ

ເພື່ອແກ້ໄຂຊ່ອງວ່າງທາງດ້ານຄວາມຮູ້ທາງສື່ສັງຄົມ, ປັບປຸງການຮູ້ທາງດ້ານສື່ດິຈິຕອລ ແລະ ຫຼຸດຜ່ອນຄວາມສ່ຽງຂອງ "ຂ່າວປອມ" ໂດຍການເສີມສ້າງຂີດຄວາມສາມາດຂອງນັກຂ່າວລາວຢູ່ ນະຄອນຫຼວງວຽງຈັນ, ແຂວງ ຫຼວງພະບາງ ແລະ ແຂວງ ຈຳປາສັກ.

ເພື່ອເພີ່ມທະວີຄວາມຮັບຮູ້ກ່ຽວກັບບັນຫາສີຂຽວ ແລະ ການປ່ຽນແປງດິນຟ້າອາກາດໃນພື້ນທີ່ຊົນນະບົດຂອງ ສປປ ລາວ

## ຜູ້ໃຫ້ທຶນ

ສະຫະພາບ ເອີຣົບ

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ
2023